# ການໃຫ້ເງິນຊ່ວຍເຫລືອຂອງໂຄງການສົ່ງເສີມການ ເງິນຈຸນລະພາກເພື່ອລົບລ້າງຄວາມທຸກຍາກ ລະຫວ່າງທະນາຄານແຫ່ງ ສປປ ລາວແລະທະນາຄານພັດທະນາອາຊີ

## ກ. ພາກສະເໜີ

ໂຄງການກສົ່ງເສີມການເງິນຈຸນລະພາກເພື່ອລຸດຜ່ອນຄວາມທຸກຍາກຂອງ ADB-BOL ເປັນໂຄງການນຶ່ງທີ່ ໃຫ້ການຊ່ວຍເຫຼືອລ້າດ້ານການ ເງິນຊຶ່ງເປັນໂຄງການ ເພື່ອຄົນທີ່ທຸກຍາກໂດຍການປະກອບທຶນເພີ່ມເຕີມໃຫ້ແກ່ບັນດາສະຖາບັນການເງິນຈຸນລະພາກ(ສກຈ) ເພື່ອສົ່ງເສີມການພັດທະນາຂະແໜງການເງິນຈຸລະພາກໃຫ້ມີການແຂ່ງຂັນ ແລະມີຄວາມຫຼາກຫຼາຍຢູ່ໃນ ສປປ ລາວ. ເງິນຊ່ວຍເຫຼືອລ້າ ດັ່ງກ່າວແມ່ນແນ່ໃສ່ກະຕຸກຊຸກຍູ້ໃຫ້ແກ່ການສ້າງຕັ້ງ ແລະດຳເນີນງານຢ່າງໝັ້ນຄົງ ຂອງບັນດາສະຖາບັນການເງິນຈຸລະພາກ ທີ່ດຳເນີນງານຕາມບົດຮຽນການເງິນຈຸລະພາກທີ່ດີເລີດ ເພື່ອໃຫ້ການຊ່ວຍເຫຼືອແກ່ປະຊາຊົນຜູ້ທຸກຍາກ, ແລະເປັນການປະກອບສ່ວນໃນການລົບລ້າງຄວາມທຸກຍາກໃນທີ່ສຸດ.



## ຂ. ເງື່ອນໄຂເຂົ້າຮ່ວມກິດຈະກຳໂຄງການ

ເງື່ອນໄຂຕົ້ນຕໍສຳລັບບັນດາສະຖາບັນການເງິນຈຸລະພາກທີ່ຈະໄດ້ຮັບເງິນຊ່ວຍເຫຼືອລ້າຈາກໂຄງການ ດັ່ງກ່າວແມ່ນຕ້ອງໄດ້ສະແດງໃຫ້ເຫັນເຖິງເຈດຈຳນົງ ແລະຄວາມສາມາດຂອງຕົນໃນການເພີ່ມຂະຫຍາຍກິດຈະກຳຂອງຕົນແບບຍືນຍົງໃນອະນາຄົດ, ແລະໃຫ້ບໍລິການແກ່ກຸ່ມຄົນທີ່ກວ້າງຂວາງຊຶ່ງໃນນັ້ນລວມທັງເພດຍິງ ແລະຜດ້ອຍໂອກາດ. ສິ່ງດັ່ງກ່າວນີ້ຈະໄດ້ປະເມີນຜ່ານແຜນການທຸລະກິດ ແລະແຜນຍຸດທະສາດໃນການຂະຫຍາຍຕົວຂອງສະຖາບັນການເງິນຈຸລະພາກນັ້ນໆ.

ມີແຜນທຸລະກິດທີ່ມີແຜນລະອຽດໃນການດຳເນີນງານສຳລັບໄລຍະເວລາຢ່າງຕ່ຳ 2 ປີ. ໃນແຜນດັ່ງກ່າວຕ້ອງລະບຸ ກ່ຽວກັບແຜນດ້ານການຈັດຕັ້ງພະນັກງານ, ຊັບສິນ, ອຸປະກອນ, ລູກຄ້າທີ່ມີຢູ່ ແລະ ລູກຄ້າເປົ້າໝາຍ, ຜະລິດຕະພັນດ້ານເງິນກູ້ ແລະເງິນຝາກປະຢັດ (ການບໍລິການດ້ານການເງິນ), ແຜນການຝຶກອົບຮົມສ້າງຄວາມສາມາດ, ການບໍລິຫານຄຸ້ມຄອງ, ທຶນ, ການຄາດຄະເນດ້ານການເງິນ ແລະແຫຼ່ງທຶນຕ່າງໆ

ບັນດາສະຖາບັນການເງິນຈຸນລະພາກທີ່ມີສິດຈະຕ້ອງໄດ້ຈົດທະບຽນ ຫຼືໄດ້ຮັບອະນຸຍາດພາຍໃຕ້ຂໍ້ກຳນົດກ່ຽວກັບການເງິນຈຸລະພາກຂອງ ທຫລ ແລະກົດໝາຍ ທີ່ກ່ຽວຂ້ອງຕ່າງໆຂອງສປປລາວ. ບັນດາສະຖາບັນການເງິນດັ່ງກ່າວອາດລວມທັງສະຫະພັນສິນເຊື່ອ ແລະຝາກປະຫຍັດ, ສະຫະກອນການເງິນ ແລະບັນດາທະນາຄານຊົນນະບົດຕ່າງໆ ແລະ ບັນດາສະຖາບັນການເງິນຈຸລະພາກອື່ນໆທີ່ຂຶ້ນທະບຽນຖືກຕ້ອງຕາມກົດໝາຍ.

ຖ້າຄວາມຕ້ອງການເງິນຊ່ວຍເຫຼືອລ້າຫາກສູງກວ່າຈຳນວນເງິນທີ່ມີຢູ່ [1] ເປົ້າໝາຍໃນການປະກອບທຶນຮອບແມ່ນເລັ່ງໃສ່ບັນດາສະຖາບັນການເງິນຈຸລະພາກທີ່ມີເປົ້າໝາຍໃຫ້ການຊ່ວຍເຫຼືອດ້ານການເງິນແກ່ຜູ້ຍິງແລະ/ຫຼືກຸ່ມຊົນຊາດຊົນເຜົ່າຕ່າງໆ, ແລະຊຸມຊົນໃນຊົນນະບົດຈະເປັນບຸລິມະສິດໃນການພິຈາລະນາໃຫ້ທຶນຊ່ວຍເຫຼືອ



## ຄ. ຂະໜາດວົງເງິນຊ່ວຍເຫຼືອລ້າ ແລະການນຳໃຊ້

**ຂະໜາດ:** ວົງເງິນຊ່ວຍເຫຼືອລ້າສຳລັບລາຍສະຖາບັນໜຶ່ງຢູ່ໃນລະຫວ່າງ 3,000 ຫາ 25,000 ດອນລາສະຫະລັດຕໍ່ປີ, (ສູງສຸດບໍ່ເກີນ 50,000 ດອນລາສະຫະລັດຕໍ່ອົງກອນໃນ ຊ່ວງ

---

[1]ລວມຍອດແຫຼ່ງທຶນຊວຍເຫຼືອລ້າທີ່ມີເພື່ອໃຫ້ການຊ່ວຍເຫຼືອແກ່ບັນ ດາສະຖາບັນການເງິນຈຸລະພາກທັງໝົດແມ່ນ 800,000 ດອນລາ ສະກະລັດ

2 ປີ). ບັນດາສະຖາບັນການເງິນຈຸລະພາກຕ້ອງໄດ້ປະກອບສ່ວນທຶນສົມທົບເປັນເງິນສົດເທົ່າກັບວົງເງິນຊ່ວຍເຫຼືອລ້າ. ທັງເງິນຊ່ວຍເຫຼືອລ້າ ແລະເງິນປະກອບສ່ວນຂອງຕົນຕ້ອງຖືກນຳໃຊ້ທັງໝົດພາຍໃນວັນທີ 30/4/2010.

**ການນຳໃຊ້ເງິນຊ່ວຍເຫຼືອລ້າ:** ເງິນຊ່ວຍເຫຼືອ ແລະເງິນທຶນປະກອບສ່ວນຕ້ອງໄດ້ຖືກນຳໃຊ້ເຂົ້າໃນກິດຈະກຳໃໝ່ ຫຼືເພີ່ມເຕີມຕ່າງໆ, ເງິນທຶນທີ່ໄດ້ຈາກການຊ່ວຍເຫຼືອລ້າ ແລະເງິນທຶນສົມທົບດັ່ງກ່າວບໍ່ສາມາດນຳໃຊ້ເຂົ້າໃນບັນດາກິດຈກຳທີ່ມີຢູ່ແລ້ວ ຫຼືສະສາງຄ່າໃຊ້ຈ່າຍທີ່ເກີດຂື້ນມາກ່ອນແລ້ວ. ເງິນທຶນທັງໝົດດັ່ງກ່າວສາມາດຖືກນຳໃຊ້ເຂົ້າໃນທຸກຂົງເຂດການດຳເນີນງານດ້ານການເງິນຈຸລະພາກທີ່ຖືກຕ້ອງຕາມກົດໝາຍເຊິ່ງລວມມີ:

- ເປັນທຶນສ້າງຕັ້ງເພື່ອໃຫ້ໄດ້ຕາມເງື່ອນໄຂຄວາມຕ້ອງການຕ່າງໆດ້ານທຶນຂອງທະນາຄານແຫ່ງສປປລາວ
- ໃຊ້ຈ່າຍເພື່ອການຝຶກອົບຮົມ, ການຊ່ວຍເຫຼືອດ້ານເຕັກນິກວິຊາການ ແລະຈ່າຍກ່ຽວກັບພະນັກງານ, ລວມທັງການຈ້າງຄູຝຶກຈາກທາງນອກ, ເງິນເດືອນຂອງພະນັກງານທີ່ຮັບສະມັກເພີ້ມເຕີມຕາມຄວາມຈຳເປັນ.
- ຊື້ວັດຖຸອຸປະກອນ ລວມທັງອຸປະກອນຮັບໃຊ້ຫ້ອງການຕ່າງໆ, ເຄື່ອງຄອມພິວເຕີ, ລະບົບຂໍ້ມູນຂ່າວສານ ແລະໂປຣແກຣມຊອບແວຕ່າງໆ, ລົດຈັກ ແລະອຸປະກອນອື່ນໆ ທີ່ມີຫຼັກສະນະຄ້າຍຄືກັນນີ້.

ເງິນຊ່ວຍເຫຼືອລ້າບໍ່ສາມາດໃຊ້ຊື້ທີ່ດິນ, ອາຄານ ຫຼື ລົດບິນ

ເງິນຊ່ວຍເຫຼືອລ້າສາມາດໃຊ້ເຂົ້າໃນກິດຈະກຳທີ່ໄດ້ນຳສະເໜີໃນແຜນທຸລະກິດທີ່ໄດ້ຍື່ນໃນສຳນວນສະເໜີຂໍທຶນ

## ງ.ມາດຖານສະເພາະໃນການໄດ້ຮັບເງິນຊ່ວຍເຫຼືອລ້າ

ເພື່ອໃຫ້ມີເງື່ອນໄຂຄົບຖ້ວນໃນການໄດ້ຮັບເງິນຊ່ວຍເຫຼືອລ້າ, ບັນດາສະຖາການເງິນຈຸລະພາກ (ສກຈ) ຕ້ອງ:

1. ໄດ້ຂື້ນທະບຽນກັບທະນາຄານແຫ່ງສປປລາວແລ້ວ, ຫຼືຢູ່ໃນຂະບວນການຂື້ນທະບຽນ[2];
2. ມີພະນັກງານປະຈຳຢ່າງໜ້ອຍສອງຄົນ, ຫຼືມີແຜນຈະຮັບພະນັກງານນີ້ ພາຍໃນ 6 ເດືອນຂ້າງໜ້າ;[3]
3. ປະກອບສ່ວນທຶນຢ່າງໜ້ອຍເທົ່າກັບຈຳນວນເງິນທີ່ຈະສະເໜີຂໍ;
4. ມີພະນັກງານທີ່ມີຄວາມສາມາດສ້າງໃບລາຍງານຖານະການເງິນເປັນປົກກະຕິ ແລະເປັນໄລຍະຕາມເງື່ອນໄຂຄວາມຮຽກຮ້ອງຕ້ອງການຂອງ ທຫລ;
5. ຍື່ນແຜນການທຸລະກິດສຳລັບຢ່າງໜ້ອຍ 2 ປີຕໍ່ໜ້າຊຶ່ງສະແດງເຫັນວ່າສະຖາບັນຂອງຕົນ:
   - ຈະບັນລຸຈຸດກຸ້ມທຶນ (ໝາຍຄວາມວ່າຍອດລາຍຮັບທັງໝົດເກີນຍອດລາຍຈ່າຍທັງໝົດ)
   - ຈະມີພະນັກງານ, ຄະນະບໍລິຫານງານ ແລະ ໂຄງສ້າງການຄຸ້ມຄອງອົງກອນຢ່າງພຽງພໍ ເພື່ອຕອບສະໜອງການບໍລິການແບບມືອາຊີບ ແລະ ເປັນສະຖາບັນທີ່ມີຄວາມໝັ້ນຄົງ.
   - ໃຫ້ການບໍລິການດ້ານການເງິນແກ່ຄົນທຸກຍາກ[4], ຊຶ່ງອາດຈະລວມມີການບໍລິການເງິນກູ້ຢືມ, ການຝາກເງິນປະຫຍັດ, ການປະກັນໄພຈຸລະພາກ, ການໂອນເງິນ ແລະອື່ນໆ;
   - ມີຄວາມຕັ້ງໃຈໃນການດຳເນີນງານ ຕາມຮູບແບບບົດຮຽນການເງິນຈຸລະພາກທີ່ດີເລີດເພື່ອຂະຫຍາຍການບໍລິການໄປສູ່ບັນດາຄົວເຮືອນ, ຜູ້ປະກອບການ ທຸລະກິດຂະໜາດນ້ອຍ ແລະຈຸລະພາກ.

[2] ສກຈໄດ້ຍື່ນສຳນວນສະເໜີຂໍຂື້ນທະບຽນເຖິງ ທຫລ ເປັນທີ່ຮຽບຮ້ອຍແລ້ວ

[3] ພະນັກງານເຮັດວຽກເຕັມເວລາ 2 ຄົນແມ່ນມາດຖານຕ່ຳສຸດສຳ ລັບການດຳເນີນງານໃຫ້ມີຄວາມຍືນຍົງ

[4] ລູກຄ້າຜູ້ທຸກຍາກທີ່ມີລາຍໄດ້ໜ້ອຍກວ່າ 1 ໂດລາຕໍ່ມື້ ກວມຢ່າງໜ້ອຍ 10% ຂອງລູກຄ້າທັງໝົດ



## ຈ. ຂໍ້ມູອື່ນໆ

ບັນດາສະຖາບັນການເງິນຈຸລະພາກທີ່ສົນໃຈຢາກໄດ້ຂໍ້ມູນຕ່າງໆ ແລະແບບຟອມໃບສະເໜີຂໍທຶນຊ່ວຍເຫຼືອລ້າດັ່ງກ່າວໃຫ້ຕິດຕໍ່ຕາມທີ່ຢູ່ດັ່ງລຸ່ມນີ້:

1. ໜ່ວຍບໍລິຫານກອງທຶນການເງິນຈຸລະພາກ, ທຫລ:
   ນາງເກສອນ ມະນີວົງ, ຫົວໜ້າພະແນກການເງິນຈຸລະພາກ
   Email: kesone88@yahoo.com
   ຕູ້ ປ ນ: 19, ນະຄອນຫຼວງວຽງຈັນ. ໂທ: 021 219 825, 244 355. ແຟກ: 021 263 044, 213 108
   ມືຖື: 020 5655753
2. ຫ້ອງການໂຄງການ, ທະນາຄານແຫ່ງ ສປປ ລາວ:
   Ms. Ursula Hammerich, ຜູ້ຊ່ວຍຄະນະ ບໍລິຫານ
   Email: uhammerich@maxwellstamp.com
   ຕູ້ ປ ນ: 4030, ນະຄອນຫຼວງວຽງຈັນ.
   ໂທ/ແຟກ: 021 264 616